ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ.....930...../ຜ-ຟຟລ

ນະຄອນຫລວງວຽງຈັນ, ວັນທີ.....06 JUN 2016

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ການຈັດກິດຈະກຳປູກຕົ້ນໄມ້ ແລະ ປ່ອຍປາ ທີ່ເຂື່ອນໄຟຟ້ານ້ຳຊອງ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດ ແຈ້ງມາຍັງທ່ານຜູ້ຖືຮຸ້ນຮັບຊາບວ່າ: ໃນວັນທີ 04 ມິຖຸນາ 2016, ຜ-ຟຟລ ໄດ້ຈັດກິດຈະກຳປູກຕົ້ນໄມ້ ແລະ ປ່ອຍປາ ເນື່ອງໃນງານວັນປູກຕົ້ນໄມ້ແຫ່ງຊາດ, ເຊິ່ງໄດ້ຈັດຂຶ້ນທີ່ເຂື່ອນໄຟຟ້ານ້ຳຊອງ, ເມືອງ ຫີນເຫີບ, ແຂວງ ວຽງຈັນ. ໃຫ້ກຽດເຂົ້າຮ່ວມງານໂດຍ ທ່ານ ປອ. ຄຳມະນີ ອິນທິລາດ ລັດຖະມົນຕີວ່າການ ກະຊວງພະລັງງານ ແລະ ບໍ່ແຮ່ ພ້ອມທັງເປັນ ປະທານສະພາບໍລິຫານ ຜ-ຟຟລ, ທ່ານ ຄຳພູທອນ ເທບສຸພົມ ຫົວໜ້າຫ້ອງວ່າການແຂວງວຽງຈັນ; ພ້ອມດ້ວຍ ຄະນະຜູ້ອຳນວຍການຂອງບໍລິສັດ, ຄະນະກົມ ຂອງກະຊວງພະລັງງານ ແລະ ບໍ່ແຮ່, ພະນັກງານ ຜ-ຟຟລ, ຕາງໜ້າອຳນາດການປົກຄອງ ແລະ ປະຊາຊົນທ້ອງຖິ່ນ ເຂົ້າຮ່ວມ.

ໃນໂອກາດນີ້ ຜ-ຟຟລ ໄດ້ຈັດສັນເບ້ຍໄມ້ ຈຳນວນ 2,000 ເບ້ຍ ປູກໃນພື້ນທີ່ 4 ເຮັກຕາ ເພື່ອເປັນການສົ່ງເສີມການປູກປ່າ ແລະ ປົກປັກຮັກສາສິ່ງແວດລ້ອມ ພ້ອມທັງການອະນຸລັກຮັກສາຊີວະນາໆພັນ ໂດຍການ ປ່ອຍປາພັນພື້ນເມືອງ ເປັນຈຳນວນ 20,000 ໂຕ ລົງສູ່ບໍລິເວນໂຮງຈັກຂອງເຂື່ອນນ້ຳຊອງ ເຊິ່ງໄຫຼລົງສູ່ ອ່າງນ້ຳງື່ມ ແລະ ແມ່ນ້ຳສາຂາອື່ນໆຕໍ່ໄປ ເພື່ອເປັນການເພີ່ມຄວາມອຸດົມສົມບູນຂອງລະບົບນິເວດໃຫ້ມີຄວາມຍືນຍົງ.

ເນື່ອງໂອກາດດັ່ງກ່າວ ຜ-ຟຟລ ຍັງໄດ້ ມອບອຸປະກອນ ການສຶກສາ ແລະ ກິລາ ລວມເປັນມູນຄ່າກວ່າ 30 ລ້ານກີບ ມອບໃຫ້ແກ່ໂຮງຮຽນປະຖົມສົມບູນ 4 ແຫ່ງ ໃນເມືອງຫີນເຫີບ ແຂວງວຽງຈັນ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານການສຶກສາ ເພື່ອເປັນການສະໜັບສະໜູນການພັດທະນາເຍົາວະຊົນຂອງຊາດ ກໍ່ຄືຊັບພະຍາກອນບຸກຄົນ ທີ່ຈະປະກອບສ່ວນ ໃນການພັດທະນາປະເທດຊາດໃນພາຍພາກໜ້າ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງໃຫ້ທ່ານຜູ້ຖືຮຸ້ນເພື່ອຮັບຊາບ.

ຮຽນມາດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ບຸນອູ້ມ ສີວັນເພັງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la










Celebrate Arbor Day
EDL-GEN
Namjong HPP, 04/06/2016


Celebrate Arbor Day
EDL-GEN
Namjong HPP, 04/06/2016











